ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----=====000=====-----

ຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ: 16 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 03 SEP 2018

# ຂໍ້ຕົກລົງ
# ວ່າດ້ວຍການກຳນົດລະຫັດຫຼັກຊັບຢູ່ ສປປ ລາວ

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012;
- ອີງຕາມດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 195/ນຍ, ລົງວັນທີ 12 ມິຖຸນາ 2017;
- ອີງຕາມຂໍ້ຕົກລົງວ່າດ້ວຍ ການແຕ່ງຕັ້ງຕະຫຼາດຫຼັກຊັບລາວ ໃຫ້ເປັນຜູ້ກຳນົດລະຫັດຫຼັກຊັບແຫ່ງຊາດລາວ, ສະບັບເລກທີ 31/ຄຄຊ, ລົງວັນທີ 31 ສິງຫາ 2015;
- ອີງຕາມໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ສະບັບເລກທີ 0023/ສຄຄຊ, ລົງວັນທີ 16 ສິງຫາ 2018.

## ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບກຳນົດລະຫັດຫຼັກຊັບ ທີ່ຈົດທະບຽນຫຼັກຊັບ ຫຼື ຝາກຢູ່ສູນຮັບຝາກຫຼັກຊັບ ເພື່ອອຳນວຍຄວາມສະດວກໃນການຄຸ້ມຄອງຂໍ້ມູນກ່ຽວກັບລະຫັດຫຼັກຊັບ ແນໃສ່ຮັບປະກັນເຮັດໃຫ້ການອອກ ແລະ ຄຸ້ມຄອງຂໍ້ມູນຂອງລະຫັດຫຼັກຊັບ ມີຄວາມເປັນລະບຽບຮຽບຮ້ອຍ, ຖືກຕ້ອງ ແລະ ສອດຄ່ອງກັບມາດຕະຖານສາກົນ ກ່ຽວກັບການກຳນົດລະຫັດຫຼັກຊັບ.

**ມາດຕາ 2 ການກຳນົດລະຫັດຫຼັກຊັບ**

ການກຳນົດລະຫັດຫຼັກຊັບ ແມ່ນການສ້າງລະຫັດປະຈຳຕົວທີ່ເປັນຕົວເລກ ແລະ ຕົວໜັງສືສາກົນສຳລັບຫຼັກຊັບໃດໜຶ່ງ ທີ່ຈົດທະບຽນ ແລະ ຝາກຢູ່ສູນຮັບຝາກຫຼັກຊັບ ໂດຍສອດຄ່ອງກັບມາດຕະຖານສາກົນ ຊຶ່ງຜູ້ກຳນົດລະຫັດຫຼັກຊັບ ເປັນຜູ້ອອກລະຫັດຫຼັກຊັບທີ່ອອກຈຳໜ່າຍຫຼັກຊັບແຕ່ລະຄັ້ງ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ຂໍລະຫັດຫຼັກຊັບ** ໝາຍເຖິງ ຜູ້ອອກຈຳໜ່າຍຫຼັກຊັບທີ່ອອກຈຳໜ່າຍ ຮຸ້ນ, ຮຸ້ນກູ້, ໜ່ວຍລົງທຶນ, ພັນທະບັດລັດຖະບານ, ພັນທະບັດທະນາຄານແຫ່ງ ສປປ ລາວ ແລະ ລະຫັດຫຼັກຊັບປະເພດອື່ນ ຕາມການກຳນົດຂອງອົງການທີ່ມີສິດອຳນາດກ່ຽວຂ້ອງ;
2. **ລະຫັດຫຼັກຊັບ** ໝາຍເຖິງ ລະຫັດທີ່ອອກໂດຍ ຕະຫຼາດຫຼັກຊັບລາວ ໃຫ້ແກ່ຫຼັກຊັບໃດໜຶ່ງ ຊຶ່ງປະ ກອບມີ: ລະຫັດຂອງປະເທດ, ລະຫັດຂອງປະເພດຫຼັກຊັບ, ລະຫັດຂອງຊື່ຜູ້ອອກຈຳໜ່າຍຫຼັກຊັບ, ລະຫັດຂອງການແຍກປະເພດຫຼັກຊັບ ແລະ ລະຫັດກ່ຽວກັບການກວດກາຄວາມຖືກຕ້ອງຂອງລະ ຫັດຫຼັກຊັບ;
3. **ພັນທະບັດລັດຖະບານ** ໝາຍເຖິງ ພັນທະບັດທີ່ອອກໂດຍ ກະຊວງການເງິນ ໃນນາມລັດຖະບານ ທີ່ຊື້-ຂາຍຜ່ານ ຕະຫຼາດຫຼັກຊັບລາວ;
4. **ພັນທະບັດທະນາຄານແຫ່ງ ສປປ ລາວ** ໝາຍເຖິງ ພັນທະບັດທີ່ອອກໂດຍ ທະນາຄານແຫ່ງ ສປປ ລາວ;
5. **ອົງການຄຸ້ມຄອງລະຫັດຫຼັກຊັບສາກົນ** (Association of National Numbering Agencies) ໝາຍເຖິງ ອົງການກຳນົດ ແລະ ຄຸ້ມຄອງຂໍ້ມູນກ່ຽວກັບລະຫັດຫຼັກຊັບຂອງ ຜູ້ກຳນົດລະຫັດຫຼັກຊັບທີ່ເປັນສະມາຊິກຂອງຕົນ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ຕະຫຼາດຫຼັກຊັບລາວ, ຜູ້ອອກຈຳໜ່າຍຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບວຽກງານການກຳນົດລະຫັດຫຼັກຊັບ ຢູ່ ສປປ ລາວ.

## ໝວດທີ 2
## ການອອກລະຫັດຫຼັກຊັບ

**ມາດຕາ 5 ປະເພດຫຼັກຊັບ**

ປະເພດຫຼັກຊັບທີ່ຕ້ອງອອກລະຫັດຫຼັກຊັບ ແມ່ນຫຼັກຊັບທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ ຫຼື ຫຼັກຊັບທີ່ຝາກຢູ່ສູນຮັບຝາກຫຼັກຊັບ ຊຶ່ງປະກອບມີ ດັ່ງນີ້:

1. ຮຸ້ນ;
2. ຮຸ້ນກູ້;
3. ໜ່ວຍລົງທຶນ;
4. ພັນທະບັດລັດຖະບານ;
5. ພັນທະບັດທະນາຄານແຫ່ງ ສປປ ລາວ;
6. ຫຼັກຊັບປະເພດອື່ນ ຕາມການກຳນົດຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 6 ເງື່ອນໄຂຂອງການອອກລະຫັດຫຼັກຊັບ**

ຫຼັກຊັບທີ່ຈະໄດ້ຮັບການອອກລະຫັດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນຫຼັກຊັບທີ່ອອກຈຳໜ່າຍໂດຍໄດ້ຮັບອະນຸຍາດ ຈາກ ອົງການທີ່ມີສິດອຳນາດກ່ຽວຂ້ອງ;
2. ເປັນຫຼັກຊັບທີ່ອອກຈຳໜ່າຍຢູ່ ສປປ ລາວ ແລ້ວນຳມາຈົດທະບຽນ ຫຼື ຝາກໄວ້ຢູ່ສູນຮັບຝາກຫຼັກຊັບ;
3. ເປັນຫຼັກຊັບທີ່ອອກຈຳໜ່າຍຢູ່ຕ່າງປະເທດ ແລ້ວນຳມາຈົດທະບຽນ ຫຼື ຝາກຫຼັກຊັບໃນສູນຮັບຝາກຫຼັກຊັບຢູ່ ສປປ ລາວ;
4. ເງື່ອນໄຂອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະຂອງ ຕະຫຼາດຫຼັກຊັບລາວ.

**ມາດຕາ 7 ຂັ້ນຕອນການອອກລະຫັດຫຼັກຊັບ**

ການອອກ ລະຫັດຫຼັກຊັບ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຜູ້ຂໍລະຫັດຫຼັກຊັບ ປະກອບເອກະສານຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ຍື່ນຕໍ່ຕະຫຼາດຫຼັກຊັບລາວ ກ່ອນການອອກຈຳໜ່າຍຫຼັກຊັບຢ່າງໜ້ອຍ ສິບວັນລັດຖະການ ເພື່ອພິຈາລະນາ;
2. ຕະຫຼາດຫຼັກຊັບລາວ ຄົ້ນຄວ້າ ແລະ ພິຈາລະນາ ກ່ຽວກັບການຮ້ອງຂໍໃນການອອກລະຫັດຫຼັກຊັບ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້;
3. ຕະຫຼາດຫຼັກຊັບລາວ ແຈ້ງຜົນການພິຈາລະນາການອອກລະຫັດຫຼັກຊັບ ໃຫ້ແກ່ຜູ້ຂໍລະຫັດຫຼັກຊັບຊາບ ພາຍໃນກຳນົດເວລາ ສອງວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານປະກອບການຂໍລະຫັດຫຼັກຊັບ ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ;
4. ສຳລັບວິທີການກຳນົດລະຫັດຫຼັກຊັບ ແມ່ນມີບົດແນະນຳສະເພາະ.

**ມາດຕາ 8 ເອກະສານປະກອບການຂໍລະຫັດຫຼັກຊັບ**

ຜູ້ຂໍລະຫັດຫຼັກຊັບ ຕ້ອງປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງຕາມແບບພິມຂອງ ຕະຫຼາດຫຼັກຊັບລາວ;
2. ໃບອະນຸຍາດໃຫ້ອອກຈຳໜ່າຍຫຼັກຊັບ ຫຼື ຝາກຫຼັກຊັບ ຂອງອົງການທີ່ມີສິດອຳນາດກ່ຽວຂ້ອງ;
3. ສຳເນົາໃບທະບຽນວິສາຫະກິດ;
4. ເອກະສານອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະຂອງ ຕະຫຼາດຫຼັກຊັບລາວ.

**ມາດຕາ 9 ການພິຈາລະນາການຂໍອະນຸຍາດອອກລະຫັດຫຼັກຊັບ**

ຕະຫຼາດຫຼັກຊັບລາວ ຕ້ອງພິຈາລະນາການອອກລະຫັດຫຼັກຊັບໃຫ້ແກ່ ຜູ້ຂໍລະຫັດຫຼັກຊັບ ພາຍໃນກຳນົດເວລາ ສອງວັນລັດຖະການ ນັບແຕ່ວັນໄດ້ຮັບ ຄຳຮ້ອງ ແລະ ເອກະສານປະກອບ ການຂໍລະຫັດຫຼັກຊັບ ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ກໍລະນີປະຕິເສດ ຕະຫຼາດຫຼັກຊັບລາວ ຈະແຈ້ງຕອບຢ່າງເປັນລາຍລັກອັກສອນໃຫ້ແກ່ ຜູ້ຂໍລະຫັດຫຼັກຊັບຊາບ ພ້ອມດ້ວຍເຫດຜົນ.

**ມາດຕາ 10 ເນື້ອໃນສຳລັບການກຳນົດລະຫັດຫຼັກຊັບ**

ເນື້ອໃນລະອຽດສຳລັບການກຳນົດລະຫັດຫຼັກຊັບ ໄດ້ກຳນົດໄວ້ໃນ ບົດແນະນຳສະເພາະ.

## ໝວດທີ 3
## ການຄຸ້ມຄອງ ແລະ ການເກັບຮັກສາຂໍ້ມູນລະຫັດຫຼັກຊັບ

**ມາດຕາ 11 ການຄຸ້ມຄອງລະຫັດຫຼັກຊັບ**

ຕະຫຼາດຫຼັກຊັບລາວ ເປັນຜູ້ກຳນົດ, ອອກ ແລະ ຄຸ້ມຄອງ ລະຫັດຫຼັກຊັບຢ່າງລວມສູນ ແລະ ເປັນເອກະພາບ ຢູ່ ສປປ ລາວ.

**ມາດຕາ 12 ການເກັບຮັກສາລະຫັດຫຼັກຊັບ**

ຕະຫຼາດຫຼັກຊັບລາວ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕ້ອງເກັບຮັກສາຂໍ້ມູນທີ່ກ່ຽວຂ້ອງກັບວຽກງານການກຳນົດລະຫັດຫຼັກຊັບໄວ້ໃນຮູບແບບ ເອກະສານ ແລະ ອີເລັກໂຕຣນິກ ຢ່າງໜ້ອຍສິບປີ ແລະ ຕ້ອງໃຫ້ຢູ່ໃນສະພາບທີ່ສາມາດໃຊ້ງານໄດ້.

## ໝວດທີ 4
## ສິດ ແລະ ໜ້າທີ່ຂອງ ຕະຫຼາດຫຼັກຊັບລາວ ແລະ ຜູ້ຂໍລະຫັດຫຼັກຊັບ

**ມາດຕາ 13 ສິດ ແລະ ໜ້າທີ່ຂອງຕະຫຼາດຫຼັກຊັບລາວ**

ຕະຫຼາດຫຼັກຊັບລາວ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ອອກລະບຽບ ຫຼື ບົດແນະນຳ ກ່ຽວກັບການກຳນົດລະຫັດຫຼັກຊັບ;
2. ຮຽກເອົາຂໍ້ມູນທີ່ກ່ຽວຂອງກັບວຽກງານການກຳນົດລະຫັດຫຼັກຊັບ ເພື່ອໃຊ້ໃນການອອກລະຫັດຫຼັກຊັບຈາກ ຜູ້ອອກຈຳໜ່າຍຮຸ້ນ, ຮຸ້ນກູ້, ໜ່ວຍລົງທຶນ, ພັນທະບັດລັດຖະບານ, ພັນທະບັດທະນາຄານແຫ່ງ ສປປ ລາວ ແລະ ຜູ້ອອກຈຳໜ່າຍຫຼັກຊັບປະເພດອື່ນຕາມການກຳນົດຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ;
3. ພິຈາລະນາກ່ຽວກັບການອອກລະຫັດຫຼັກຊັບເກົ່າຄືນໃໝ່;
4. ຂຶ້ນທະບຽນລະຫັດຫຼັກຊັບ;
5. ອອກລະຫັດຫຼັກຊັບ;
6. ປັບປຸງ, ປ່ຽນແປງ, ດັດແກ້ ຫຼື ຍົກເລີກກ່ຽວກັບລະຫັດຫຼັກຊັບ;
7. ຄຸ້ມຄອງ ແລະ ເກັບຮັກສາຂໍ້ມູນກ່ຽວກັບລະຫັດຫຼັກຊັບ;
8. ລາຍງານກ່ຽວກັບການ ອອກ, ປັບປຸງ, ປ່ຽນແປງ, ດັດແກ້ ຫຼື ການຍົກເລີກ ລະຫັດຫຼັກຊັບ ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນ ພາຍໃນກຳນົດເວລາ ຫ້າວັນລັດຖະການ ນັບແຕ່ວັນທີ່ໄດ້ມີການ ອອກ, ປັບປຸງ, ປ່ຽນແປງ, ດັດແກ້ ຫຼື ການຍົກເລີກ ລະຫັດຫຼັກຊັບ ເປັນຕົ້ນໄປ;

9. ສະໜອງຂໍ້ມູນກ່ຽວກັບການ ອອກ, ປັບປຸງ, ປ່ຽນແປງ, ດັດແກ້ ຫຼື ການຍົກເລີກ ລະຫັດຫຼັກຊັບ ໃຫ້ແກ່ ອົງການຄຸ້ມຄອງວຽກງານຫຼັກຊັບສາກົນ ພາຍໃນກຳນົດເວລາ ສອງວັນລັດຖະການ ນັບແຕ່ວັນທີ່ໄດ້ມີການ ອອກ, ປັບປຸງ, ປ່ຽນແປງ, ດັດແກ້ ຫຼື ການຍົກເລີກ ລະຫັດຫຼັກຊັບ ເປັນຕົ້ນໄປ;
10. ໂຄສະນາ ເຜີຍແຜ່ກ່ຽວກັບວຽກງານການກຳນົດລະຫັດຫຼັກຊັບ ໃຫ້ແກ່ຜູ້ອອກຈຳໜ່າຍຫຼັກຊັບ ແລະ ພາກສ່ວນກ່ຽວຂ້ອງອື່ນຊາບ;
11. ພົວພັນຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນກ່ຽວກັບວຽກງານການກຳນົດລະຫັດຫຼັກຊັບ;
12. ຊຸກຍູ້ ແລະ ສົ່ງເສີມຜູ້ອອກຈຳໜ່າຍຫຼັກຊັບ ໃຫ້ມີຂຶ້ນທະບຽນຫຼັກຊັບ ແລະ ຂໍອອກລະຫັດຫຼັກຊັບຕາມລະບຽບການ;
13. ເປີດເຜີຍຂໍ້ມູນໃຫ້ແກ່ມວນຊົນ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດຫຼັກຊັບຊາບ ກ່ຽວກັບການ ອອກ, ປັບປຸງ, ປ່ຽນແປງ, ດັດແກ້ ຫຼື ການຍົກເລີກ ລະຫັດຫຼັກຊັບ ພາຍໃນກຳນົດເວລາ ສອງວັນລັດຖະການ ນັບແຕ່ວັນທີ່ໄດ້ ອອກ, ປັບປຸງ, ປ່ຽນແປງ, ດັດແກ້ ຫຼື ການຍົກເລີກ ລະຫັດຫຼັກຊັບ ເປັນຕົ້ນໄປ ຜ່ານຊ່ອງທາງເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບລາວ;
14. ເກັບຮັກສາຂໍ້ມູນທີ່ກ່ຽວຂ້ອງກັບວຽກງານການກຳນົດລະຫັດຫຼັກຊັບ;
15. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການກຳນົດຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 14 ສິດ ແລະ ໜ້າທີ່ຂອງຜູ້ຂໍລະຫັດຫຼັກຊັບ**

ຜູ້ຂໍລະຫັດຫຼັກຊັບ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ສະເໜີຂໍລະຫັດຫຼັກຊັບຈາກ ຕະຫຼາດຫຼັກຊັບລາວ;
2. ໄດ້ຮັບຂໍ້ມູນທີ່ກ່ຽວຂ້ອງກັບການອອກລະຫັດຫຼັກຊັບຂອງ ຕະຫຼາດຫຼັກຊັບລາວ;
3. ສະໜອງຂໍ້ມູນທີ່ຈຳເປັນກ່ຽວຂ້ອງກັບ ວຽກງານການກຳນົດລະຫັດຫຼັກຊັບໃຫ້ແກ່ ຕະຫຼາດຫຼັກຊັບລາວ ເພື່ອອອກລະຫັດຫຼັກຊັບໃຫ້ຕົນ;
4. ຊີ້ແຈງບັນຫາທີ່ຕິດພັນກັບ ວຽກງານການອອກລະຫັດຫຼັກຊັບ;
5. ສະໜອງຂໍ້ມູນກ່ຽວກັບແຜນການກະກຽມການອອກຈຳໜ່າຍຫຼັກຊັບຂອງຕົນໃຫ້ແກ່ ຕະຫຼາດຫຼັກຊັບລາວ ກ່ອນການອອກຈຳໜ່າຍໃນແຕ່ລະຄັ້ງຢ່າງເປັນລາຍລັກອັກສອນ;
6. ຮັບປະກັນຄວາມຖືກຕ້ອງຂອງຂໍ້ມູນທີ່ໄດ້ສະໜອງໃຫ້ ຕະຫຼາດຫຼັກຊັບລາວ;
7. ເກັບຮັກສາຂໍ້ມູນທີ່ກ່ຽວຂ້ອງກັບການສະເໜີຂໍອອກລະຫັດຫຼັກຊັບ ແລະ ຂໍ້ມູນທີ່ ຕະຫຼາດຫຼັກຊັບລາວ ສະໜອງໃຫ້;
8. ສະໜອງຂໍ້ມູນທີ່ກ່ຽວຂ້ອງກັບວຽກງານການອອກ ຫຼື ກຳນົດລະຫັດຫຼັກຊັບ ຕາມການຮຽກຮ້ອງຂອງ ຕະຫຼາດຫຼັກຊັບລາວ ຫຼື ຕາມການສະເໜີ ຫຼື ຕາມການຮຽກຮ້ອງຂອງອົງການທີ່ມີສິດອຳນາດກ່ຽວຂ້ອງ;
9. ແຈ້ງໃຫ້ ຕະຫຼາດຫຼັກຊັບລາວ ຊາບລ່ວງໜ້າກໍລະນີປ່ຽນ ຊື່, ຄອບຄອງ, ຄວບ, ຍຸບເລີກ ກ່ຽວກັບກິດຈະການ, ປ່ຽນແປງທຶນຈົດທະບຽນ ຫຼື ອື່ນໆທີ່ມີຜົນຕໍ່ກັບການກຳນົດລະຫັດຫຼັກຊັບ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການກຳນົດຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 15 ນະໂຍບາຍຕໍ່ຜູ້ມີຜົນງານ**

ຕະຫຼາດຫຼັກຊັບລາວ, ຜູ້ອອກຈໍາໜ່າຍຫຼັກຊັບ ແລະ ພາກສ່ວນທີ່ກ່ຽວຂ້ອງ ກັບວຽກງານການກໍານົດລະຫັດຫຼັກຊັບຢູ່ ສປປ ລາວ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຕາມລະບຽບການສະເພາະ.

**ມາດຕາ 16 ມາດຕະການຕໍ່ຜູ້ລະເມີດ**

ຕະຫຼາດຫຼັກຊັບລາວ, ຜູ້ອອກຈໍາໜ່າຍຫຼັກຊັບ ແລະ ພາກສ່ວນທີ່ກ່ຽວຂ້ອງ ກັບວຽກງານການກໍານົດລະຫັດຫຼັກຊັບຢູ່ ສປປ ລາວ ທີ່ລະເມີດຂໍ້ຕົກລົງສະບັບນີ້ທີ່ກໍ່ໃຫ້ເກີດຄວາມເສັຍຫາຍແກ່ ລັດ, ສັງຄົມ, ບຸກຄົນ ຫຼື ນິຕິບຸກຄົນ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສັຍຫາຍທາງແພ່ງ ຫຼື ຮັບຜິດຊອບທາງອາຍາ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 166, 167, 168, 169 ແລະ 170 ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ຕາມກໍລະນີເບົາ ຫຼື ໜັກ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 17 ການຈັດຕັ້ງປະຕິບັດ**

ຕະຫຼາດຫຼັກຊັບລາວ, ຜູ້ອອກຈໍາໜ່າຍຫຼັກຊັບ ແລະ ພາກສ່ວນທີ່ກ່ຽວຂ້ອງ ກັບວຽກງານການກໍານົດລະຫັດຫຼັກຊັບຢູ່ ສປປ ລາວ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 18 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນ ລົງລາຍເຊັນເປັນຕົ້ນໄປ.

ປະທານຄະນະກໍາມະການຄຸ້ມຄອງຫຼັກຊັບ

ຄະນະກໍາມະການຄຸ້ມຄອງຫຼັກຊັບ ປະທານ

ສົມດີ ດວງດີ

9. ສະໜອງຂໍ້ມູນກ່ຽວກັບການ ອອກ, ປັບປຸງ, ປ່ຽນແປງ, ດັດແກ້ ຫຼື ການຍົກເລີກ ລະຫັດຫຼັກຊັບ ໃຫ້ແກ່ ອົງການຄຸ້ມຄອງວຽກງານຫຼັກຊັບສາກົນ ພາຍໃນກຳນົດເວລາ ສອງວັນລັດຖະການ ນັບແຕ່ວັນທີ່ໄດ້ມີການ ອອກ, ປັບປຸງ, ປ່ຽນແປງ, ດັດແກ້ ຫຼື ການຍົກເລີກ ລະຫັດຫຼັກຊັບ ເປັນຕົ້ນໄປ;
10. ໂຄສະນາ ເຜີຍແຜ່ກ່ຽວກັບວຽກງານການກຳນົດລະຫັດຫຼັກຊັບ ໃຫ້ແກ່ຜູ້ອອກຈຳໜ່າຍຫຼັກຊັບ ແລະ ພາກສ່ວນກ່ຽວຂ້ອງອື່ນຊາບ;
11. ພົວພັນຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນກ່ຽວກັບວຽກງານການກຳນົດລະຫັດຫຼັກຊັບ;
12. ຊຸກຍູ້ ແລະ ສົ່ງເສີມຜູ້ອອກຈຳໜ່າຍຫຼັກຊັບ ໃຫ້ມີຂຶ້ນທະບຽນຫຼັກຊັບ ແລະ ຂໍອອກລະຫັດຫຼັກຊັບຕາມລະບຽບການ;
13. ເປີດເຜີຍຂໍ້ມູນໃຫ້ແກ່ມວນຊົນ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດຫຼັກຊັບຊາບ ກ່ຽວກັບການ ອອກ, ປັບປຸງ, ປ່ຽນແປງ, ດັດແກ້ ຫຼື ການຍົກເລີກ ລະຫັດຫຼັກຊັບ ພາຍໃນກຳນົດເວລາ ສອງວັນລັດຖະການ ນັບແຕ່ວັນທີ່ໄດ້ ອອກ, ປັບປຸງ, ປ່ຽນແປງ, ດັດແກ້ ຫຼື ການຍົກເລີກ ລະຫັດຫຼັກຊັບ ເປັນຕົ້ນໄປ ຜ່ານຊ່ອງທາງເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບລາວ;
14. ເກັບຮັກສາຂໍ້ມູນທີ່ກ່ຽວຂ້ອງກັບວຽກງານການກຳນົດລະຫັດຫຼັກຊັບ;
15. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການກຳນົດຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 14 ສິດ ແລະ ໜ້າທີ່ຂອງຜູ້ຂໍລະຫັດຫຼັກຊັບ**

ຜູ້ຂໍລະຫັດຫຼັກຊັບ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ສະເໜີຂໍລະຫັດຫຼັກຊັບຈາກ ຕະຫຼາດຫຼັກຊັບລາວ;
2. ໄດ້ຮັບຂໍ້ມູນທີ່ກ່ຽວຂ້ອງກັບການອອກລະຫັດຫຼັກຊັບຂອງ ຕະຫຼາດຫຼັກຊັບລາວ;
3. ສະໜອງຂໍ້ມູນທີ່ຈຳເປັນກ່ຽວຂ້ອງກັບ ວຽກງານການກຳນົດລະຫັດຫຼັກຊັບໃຫ້ແກ່ ຕະຫຼາດຫຼັກຊັບລາວ ເພື່ອອອກລະຫັດຫຼັກຊັບໃຫ້ຕົນ;
4. ຊີ້ແຈງບັນຫາທີ່ຕິດພັນກັບ ວຽກງານການອອກລະຫັດຫຼັກຊັບ;
5. ສະໜອງຂໍ້ມູນກ່ຽວກັບແຜນການກະກຽມການອອກຈຳໜ່າຍຫຼັກຊັບຂອງຕົນໃຫ້ແກ່ ຕະຫຼາດຫຼັກຊັບລາວ ກ່ອນການອອກຈຳໜ່າຍໃນແຕ່ລະຄັ້ງຢ່າງເປັນລາຍລັກອັກສອນ;
6. ຮັບປະກັນຄວາມຖືກຕ້ອງຂອງຂໍ້ມູນທີ່ໄດ້ສະໜອງໃຫ້ ຕະຫຼາດຫຼັກຊັບລາວ;
7. ເກັບຮັກສາຂໍ້ມູນທີ່ກ່ຽວຂ້ອງກັບການສະເໜີຂໍອອກລະຫັດຫຼັກຊັບ ແລະ ຂໍ້ມູນທີ່ ຕະຫຼາດຫຼັກຊັບລາວ ສະໜອງໃຫ້;
8. ສະໜອງຂໍ້ມູນທີ່ກ່ຽວຂ້ອງກັບວຽກງານການອອກ ຫຼື ກຳນົດລະຫັດຫຼັກຊັບ ຕາມການຮຽກຮ້ອງຂອງ ຕະຫຼາດຫຼັກຊັບລາວ ຫຼື ຕາມການສະເໜີ ຫຼື ຕາມການຮຽກຮ້ອງຂອງອົງການທີ່ມີສິດອຳນາດກ່ຽວຂ້ອງ;
9. ແຈ້ງໃຫ້ ຕະຫຼາດຫຼັກຊັບລາວ ຊາບລ່ວງໜ້າກໍລະນີປ່ຽນ ຊື່, ຄອບຄອງ, ຄວບ, ຍຸບເລີກ ກ່ຽວກັບກິດຈະການ, ປ່ຽນແປງທຶນຈົດທະບຽນ ຫຼື ອື່ນໆທີ່ມີຜົນຕໍ່ກັບການກຳນົດລະຫັດຫຼັກຊັບ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການກຳນົດຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ.